ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈໍາປາສັກ
ພະແນກໂຍທາທິການ ແລະ ຂົນສົ່ງ

ແຂວງຈໍາປາສັກ, ວັນທີ: 21/8/2026

## ໜັງສືເຊີນເຂົ້າຮ່ວມປະມູນ

ເຖິງ: ບັນດາບໍລິສັດຂຸດຄົ້ນ, ບໍລິສັດກໍ່ສ້າງຂົວທາງ ແລະ ບໍລິສັດຊື້ຂາຍລົດ ທີ່ນັບຖື.

ເລື່ອງ: ເຂົ້າຮ່ວມປະມູນ ຈັດຊື້-ຈັດຈ້າງພາຫະນະ-ເຄື່ອງຈັກ ແລະ ຄວາມປອດໄພ, ຈັດຊື້ວັດສະດຸ ເຂົ້າໃສ່ວຽກງານຂອງກອງສ້ອມແປງທາງຫຼວງ.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງຈໍາປາສັກ ສະບັບເລກທີ 357/ຈຂ.ຈສ, ລົງວັນທີ 23 ມີນາ 2023 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກ ໂຍທາທິການ ແລະ ຂົນສົ່ງແຂວງຈໍາປາສັກ;
- ອີງຕາມ ຂໍ້ຕົກລົງຂອງປະທານຄະນະກໍາມະການປົກຄອງແຂວງ ສະບັບເລກທີ 8021/ຄປຂ, ລົງວັນທີ 20 ສິງຫາ 2026 ວ່າດ້ວຍການອະນຸມັດສ້າງຕັ້ງກອງສ້ອມແປງທາງຫຼວງ.

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈໍາປາສັກ ແຈ້ງມາຍັງທ່ານຊາບວ່າ: ໃນປີ 2026 ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ໄດ້ຮັບງົບປະມານກອງທຶນທາງ ເຂົ້າໃສ່ ກອງສ້ອມແປງທາງຫຼວງ ຈໍານວນໜຶ່ງ ເພື່ອມາຈັດສັນເຂົ້າໃສ່, ວຽກຈັດຊື້ພາຫະນະ-ເຄື່ອງຈັກ ແລະ ຄວາມປອດໄພ, ວຽກຈັດຊື້ວັດສະດຸມາສ້ອມແປງທາງຫຼວງພາຍໃນແຂວງ, ເຊິ່ງຜູ້ເຂົ້າຮ່ວມການຈັດຊື້-ຈັດຈ້າງຕ້ອງມີເງື່ອນໄຂດັ່ງນີ້:

1. ເປັນບໍລິສັດທີ່ນໍາເຂົ້າພາຫະນະ ແລະ ຊື້ຂາຍຖືກຕ້ອງຕາມລະບຽບກົດໝາຍ;
2. ເປັນບໍລິສັດທີ່ມີແຫຼ່ງວັດສະດຸ ແລະ ໄດ້ຮັບການຂຸດຄົ້ນຕາມລະບຽບການ ພ້ອມທັງການອະນຸມັດນໍາເຂົ້າວັດສະດຸ ສາມາດຕອບສະໜອງໃຫ້ໄດ້ຕາມຄວາມຕ້ອງການຂອງເຈົ້າຂອງໂຄງການ;
3. ການຈັດຊື້-ຈັດຈ້າງຈະໄດ້ເປີດຂຶ້ນໃນວັນສຸກ ວັນທີ 25 ກັນຍາ 2026, ເວລາ 9,00 ໂມງ ທີ່ຫ້ອງປະຊຸມໃຫຍ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈໍາປາສັກ.
4. ບໍລິສັດທີ່ມີຄວາມສົນໃຈ ເຂົ້າຮ່ວມ ຈັດຊື້-ຈັດຈ້າງ ແມ່ນໃຫ້ມາພົວພັນຊື້ຊອງປະມູນ ນໍາຂະແໜງຂົວທາງ ຊອງລະ 500.000 ກີບ ຕາມໂມງລັດຖະການ ເລີ່ມແຕ່ມື້ອອກໜັງສືແຈ້ງເຊີນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ຜູ້ທີ່ມີຄວາມສົນໃຈໃນການປະມູນ.

ຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ປອ. ສິດທິພອນ ບຸດຕິວົງ

สแกนด้วย CamScanner